ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 03 ຫາ 07 ມີນາ 2025



ນາຍົກລັດຖະມົນຕີ ຊີ້ນຳວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ນາຍົກລັດຖະມົນຕີ ຊີ້ນຳວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ພາບ-ຂ່າວໂດຍ:ພະແນກໂຄສະນາ ແລະ ຂ່າວສານ

ໃນຕອນບ່າຍ ວັນທີ 31 ມັງກອນ 2025 ນີ້, ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ໂອ້ລົມ ຕໍ່ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດ ວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປີ 2024 ແລະ ທິດທາງແຜນການ ປີ 2025; ມີທ່ານ ປອ. ລິນຄຳ ດວງສະຫວັນ, ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້, ບັນດາທ່ານ ລັດຖະມົນຕີ, ຜູ້ຕາງໜ້າສະພາແຫ່ງຊາດ, ທ່ານ ຮອງລັດຖະມົນຕີ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ພະນັກງານຫຼັກແຫຼ່ງ ກະຊວງກະສິກຳ ແລະ ປ່າໄມ້, ຜູ້ຕາງໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳ ແຂວງ ແລະ ນະຄອນຫຼວງວຽງຈັນ ເຂົ້າຮ່ວມ.

ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ລາຍງານໃຫ້ຊາບກ່ຽວກັບ ຜົນການດຳເນີນກອງປະຊຸມຄັ້ງນີ້ ເຫັນວ່າ ກອງປະຊຸມ ໄດ້ຮັບຟັງການລາຍງານ, ປະກອບຄຳເຫັນ ແລະ ເປັນເອກະພາບຕໍ່ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃນປີຜ່ານມາ ໂດຍສະເພາະ ຜົນສຳເລັດອັນພົ້ນເດັ່ນ, ຂໍ້ຄົງຄ້າງ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ມາດຕະການ ແລະ ວິທີແກ້ໄຂ ເພື່ອເປັນພື້ນຖານແກ່ການຈັດຕັ້ງປະຕິບັດວຽກງານ ທີ່ກຳນົດໄວ້ໃນທິດທາງແຜນການ ປີ 2025 ໃຫ້ບັນລຸຄາດໝາຍ ແລະ ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ; ຮັບຟັງການລາຍງານ ແລະ ປະກອບຄຳເຫັນ ຈາກບັນດາກົມວິຊາການ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາກະຊວງທີ່ກ່ຽວຂ້ອງ ລວມທັງໝົດ 13 ຫົວຂໍ້ ເປັນຕົ້ນ ລາຍງານຂະບວນການສົ່ງເສີມການຜະລິດ; ການຄຸ້ມຄອງການສົ່ງອອກ-ນຳເຂົ້າສິນຄ້າກະສິກຳຢູ່ບັນດາດ່ານ; ນະໂຍບາຍສົ່ງເສີມການຜະລິດກະສິກຳ-ປ່າໄມ້; ການອຳນວຍຄວາມສະດວກ ການເຂົ້າເຖິງສິນເຊື່ອດອກເບ້ຍທີ່ເໝາະສົມຂອງສະຫະກອນ, ກຸ່ມຜະລິດ ແລະ ຜູ້ປະກອບການ




ຂະໜາດນ້ອຍ ແລະ ກາງ...; ພ້ອມກັນນັ້ນ, ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຍັງໄດ້ ສະເໜີໃຫ້ຊາບ ກ່ຽວກັບບັນດາເນື້ອໃນສຳຄັນ ທີ່ກອງ ປະຊຸມໄດ້ຕົກລົງຮ່ວມກັນ ແລະ ຈະຕ້ອງພ້ອມກັນໄດ້ ສຸມໃສ່ປະຕິບັດໃນປີ 2025.

ໃນໂອກາດດັ່ງກ່າວ, ທ່ານນາຍົກລັດຖະມົນຕີ ກໍ່ໄດ້ໃຫ້ກຽດໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງ ຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະ ກອນ ທົ່ວຂະແໜງ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ທີ່ສາມາດປະຕິບັດໄດ້ໃນປີຜ່ານມາ; ໄດ້ ຍົກໃຫ້ເຫັນຄວາມພະຍາຍາມ ແລະ ເອົາໃຈໃສ່ ຂອງ ສູນກາງພັກ, ລັດຖະບານ ແລະ ອົງການປົກຄອງທຸກ ຂັ້ນ ໃນການແກ້ໄຂບັນຫາຄວາມຫຍຸ້ງຍາກໃນຊຸມ ປີຜ່ານມາ ເປັນຕົ້ນ ບັນຫາເສດຖະກິດ-ການເງິນ, ບັນຫາແຮງງານ ແລະ ປະກົດການຫຍໍ້ທໍ້ຕ່າງໆໃນ ສັງຄົມ, ໄດ້ຍົກໃຫ້ເຫັນສະພາບການພົ້ນເດັ່ນ ຢູ່ພາກ ພື້ນ ແລະ ສາກົນ, ບັນດາວຽກງານ ແລະ ເຫດການ ສຳຄັນ ໃນປີ 2025 ເປັນຕົ້ນ ການກະກຽມ ແລະ ສະເຫຼີມສະຫຼອງ 3 ວັນປະຫວັດສາດຂອງຊາດ, ການ ກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງ ພັກ ແລະ ອື່ນໆ.

ອັນສຳຄັນ, ທ່ານນາຍົກລັດຖະມົນຕີ ໄດ້ ສະເໜີໃຫ້ເອົາໃຈໃສ່ຕື່ມບາງດ້ານ ເປັນຕົ້ນຍົກສູງ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມ ປີ 2025 ເຊິ່ງຖືວ່າ ເປັນແຜນ "ບຸກບືນສູ້ຊົນສູງສຸດ"; ສູ້ຊົນປະຕິບັດ ບັນດາຄາດໝາຍໃຫຍ່ຂອງຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ບັນລຸຕາມແຜນກຳນົດໄວ້; ສຸມໃສ່ ຊຸກຍູ້ການຜະລິດກະສິກຳເປັນສິນຄ້າ ເພື່ອສະໜອງ ໃຫ້ພາຍໃນໃຫ້ພຽງພໍ ແລະ ສົ່ງອອກ ໂດຍເລັ່ງຊຸກຍູ້ ສົ່ງເສີມສິນຄ້າກະສິກຳ-ລ້ຽງສັດ ທີ່ໄດ້ມີສັນຍາກັບ ປະເທດຄູ່ການຄ້າແລ້ວ; ສຸມໃສ່ປັບປຸງມາດຕະຖານ ແລະ ຄຸນນະພາບສິນຄ້າກະສິກຳ, ລວມທັງ ແນວ ພັນພືດ, ແນວພັນສັດ ໃຫ້ມີຄຸນນະພາບ ແລະ ມີ ປະລິມານພຽງພໍ; ສຸມໃສ່ຂະຫຍາຍໂຮງງານທົວ ອາຫານສັດ, ໂຮງງານຜະລິດຝຸ່ນປຸ໋ຍ, ປັບປຸງເຕັກນິກ ແລະ ເຄື່ອງມື-ກົນຈັກການຜະລິດ ໃຫ້ພຽງພໍ ແລະ ມີ ຄຸນນະພາບ ເຊິ່ງໃນຕໍ່ໜ້າ ພະນັກງານກະສິກຳເມືອງ ຕ້ອງໄດ້ແນະນຳປະຊາຊົນຜະລິດຕົວຈິງ; ຮີບຮ້ອນ ກຳນົດບັນຊີລາຍການສິນຄ້າກະສິກຳ ທີ່ພວກເຮົາ ຈະຜະລິດ ເພື່ອທົດແທນການນຳເຂົ້າ, ຫຼຸດຜ່ອນການ ໄຫຼອອກຂອງເງິນຕາ; ສຸມໃສ່ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານການຜະລິດ ແລະ ເຕັກນິກ ເປັນ ຕົ້ນ ໂຮງອົບ, ໂຮງຄັດເມັດ, ລານຕາກ, ຫ້ອງວິໄຈ ໂດຍຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການເອກະຊົນມີ

ສ່ວນຮ່ວມ ໃຫ້ແຂງແຮງກວ່າເກົ່າ; ສຸມໃສ່ຈັດສັນເນື້ອທີ່ການຜະລິດກະສິກຳໃຫ້ລະອຽດ ແລະ ຊັດເຈນ ໂດຍອີງໃສ່ເງື່ອນໄຂທາງດ້ານທຳມະຊາດ ແລະ ທ່າແຮງຂອງແຕ່ລະເຂດ, ທັງໃຫ້ມີມາດຕະການຄຸ້ມຄອງເນື້ອທີ່ການຜະລິດກະສິກຳ ແລະ ລະບົບຊົນລະປະທານໃຫ້ມີຄວາມຍືນຍົງ; ເອົາໃຈໃສ່ຄຸ້ມຄອງ ແລະ ປົກປັກຮັກສາເນື້ອທີ່ປ່າໄມ້ເຂດ 3 ປະເພດປ່າ ໂດຍໃຫ້ເລັ່ງສຳຫຼວດ ແລະ ກຳນົດຂອບເຂດປ່າຄືນ ໃໝ່ໃຫ້ຊັດເຈນ ແລະ ແທດກັບຕົວຈິງ; ໃຫ້ຊຸກຍູ້ສົ່ງເສີມພາກເອກະຊົນລົງທຶນປູກ ແລະ ຟື້ນຟູປ່າໄມ້ ດ້ວຍຮູບແບບທັນເປັນໂຄງການສິນເຊື່ອກາກບອນ, ຮູບແບບຕິດພັນກັບການທ່ອງທ່ຽວທຳມະຊາດ ໂດຍໃຫ້ຄົ້ນຄວ້າຄືນ ນະໂຍບາຍການເກັບຄ່າສຳປະທານໃນກິດຈະການທີ່ລັດສົ່ງເສີມ; ຊຸກຍູ້ສົ່ງເສີມທຸກພາກສ່ວນໃນສັງຄົມ ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະ ການລົງທຶນຂອງພາກເອກະຊົນ ເພື່ອສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ປະຊາຊົນກັບທີ່; ສືບຕໍ່ຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ໂຄງການທຶນຊ່ວຍເຫຼືອທາງການ ເພື່ອພັດທະນາສຳເລັດຕາມແຜນກຳນົດໄວ້; ສືບຕໍ່ຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຫຼາຍຂຶ້ນ; ສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ນິຕິກຳໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢ່າງແຂງແຮງ, ມີປະສິດທິພາບ ແລະ ປະສິດທິຜົນຢ່າງແທ້ຈິງ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;